**ບົດຖະແຫຼງຂ່າວ**

**ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19**

**ປະຈຳວັນພຸດ ວັນທີ 17 ມີນາ ປີ 2021**

ໂດຍ: ທ່ານ ດຣ. ລັດສະໝີ ວົງຄຳຊາວ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ, ຕາງໜ້າໃຫ້ກອງເລຂາຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂໍອະນຸຍາດລາຍງານ:

## I. ສະພາບການລະບາດຂອງພະຍາດ COVID-19 ຢູ່ ສປປ ລາວ ແລະ ໃນໂລກ

- ປະຈຸບັນ ທົ່ວໂລກມີການລາຍງານການລະບາດຂອງພະຍາດ COVID-19 ທັງໝົດ 219 (ປະເທດ/ເຂດ), ຜູ້ຕິດເຊື້ອສະສົມ **121,209,665** ຄົນ, ເສຍຊີວິດສະສົມ **2,681,505** ຄົນ ແລະ ປິ່ນປົວຫາຍດີ **97,782,874** ຄົນ;
- ປະເທດທີ່ມີລາຍງານການຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ ແມ່ນ **ສະຫະລັດອາເມຣິກາ** ມີຜູ້ຕິດເຊື້ອສະສົມ **30,189,672** ຄົນ ແລະ ເສຍຊີວິດສະສົມ **549,186** ຄົນ;
- ອັນດັບ 2 ແມ່ນ ປະເທດ **ບຣາຊິວ** ມີຜູ້ຕິດເຊື້ອສະສົມ **11,609,601** ຄົນ; ເສຍຊີວິດ **282,400** ຄົນ;

- **ສຳລັບບັນດາກຸ່ມປະເທດອາຊຽນ**, ປະເທດ **ອິນໂດເນເຊຍ (ອັນດັບທີ 18 ຂອງໂລກ)** ແມ່ນມີຜູ້ຕິດເຊື້ອສະສົມ ສູງກວ່າໝູ່ , ຖັດລົງມາແມ່ນປະເທດ **ຟີລິບປິນ, ມາເລເຊຍ, ມຽນມ້າ** ຕາມລຳດັບ;

## II. ການເຝົ້າລະວັງ COVID-19 ຢູ່ ສປປ ລາວ

- **ວັນທີ 16 ມີນາ ທົ່ວປະເທດມີຜູ້ເດີນທາງເຂົ້າມາ ມີທັງໝົດ 2,892 ຄົນ:**
  - ໃນນັ້ນຈຸດຜ່ານດ່ານ **ລາວ - ໄທ** ທັງໝົດ **1,827** ຄົນ;
  - ຈຸດຜ່ານດ່ານ **ລາວ - ຈີນ** ທັງໝົດ **39** ຄົນ;
  - ຈຸດຜ່ານດ່ານ **ລາວ - ຫວຽດນາມ** ທັງໝົດ **1,026** ຄົນ;
- ທຸກຄົນທີ່ເຂົ້າມາທາງຈຸດຜ່ານແດນ ໃນມື້ວານນີ້ ແມ່ນ
  - ໄດ້ຜ່ານການວັດແທກອຸນຫະພູມຮ່າງກາຍ, ແຕ່ບໍ່ພົບຜູ້ມີອາການເປັນໄຂ້
  - ໄດ້ເກັບຕົວຢ່າງທຸກໆຄົນມາກວດຊອກຫາຜູ້ຕິດເຊື້ອ COVID-19;
  - ແລະ ໄດ້ສົ່ງໄປສະຖານທີ່ຈຳກັດບໍລິເວນ ທີ່ຄະນະສະເພາະກິດກຳນົດໄວ້.

## 1. ການຕິດຕາມຜູ້ຖືກຈຳກັດບໍລິເວນ ຢູ່ໃນສະຖານທີ່ ທີ່ກຳນົດໄວ້ ໃນຂອບເຂດທົ່ວປະ

**ເທດ**

- ປະຈຸບັນ ທົ່ວປະເທດ ມີສູນຈຳກັດບໍລິເວນທີ່ຍັງເປີດນຳໃຊ້ຢູ່ ທັງໝົດ **34** ສູນ, ມີຜູ້ຖືກຈຳກັດບໍລິເວນຢູ່ສູນ **3,478** ຄົນ ໄດ້ເກັບຕົວຢ່າງມາກວດວິເຄາະທັງໝົດ ຊອກຫາຜູ້ຕິດເຊື້ອ COVID-19.

**2. ການເກັບຕົວຢ່າງມາກວດວິເຄາະ ແລະ ຄົ້ນຫາຜູ້ຕິດເຊື້ອພະຍາດ**

- ໃນວັນທີ 16 ມີນາ 2021 ໄດ້ເກັບຕົວຢ່າງມາກວດວິເຄາະທັງໝົດ **210** ຄົນ;
- ຜົນກວດວິເຄາະທັງໝົດ **ແມ່ນບໍ່ພົບເຊື້ອ, ໝາຍຄວາມວ່າ ວັນທີ 16 ມີນາ 2021 ບໍ່ພົບຜູ້ຕິດເຊື້ອໃໝ່**;
- ສັງລວມການກວດວິເຄາະ ນັບແຕ່ ເດືອນມັງກອນ 2020 ຮອດ ປະຈຸບັນ ໄດ້ເກັບຕົວຢ່າງມາກວດທັງໝົດ **123,533** ຕົວຢ່າງ, ກວດພົບເຊື້ອສະສົມ **49** ຄົນ.

**3. ການຕິດຕາມປິ່ນປົວຄົນເຈັບຢູ່ໂຮງໝໍ**

- ມາຮອດປະຈຸບັນ ຜູ້ຕິດເຊື້ອພະຍາດ COVID-19 ຍັງນອນຕິດຕາມປິ່ນປົວຢູ່ໂຮງໝໍທີ່ຖືກກຳນົດໄວ້ ຈຳນວນ 04 ຄົນ (ນະຄອນຫຼວງ 3 ຄົນ ແລະ ສະຫວັນນະເຂດ 1 ຄົນ) ເຊິ່ງທັງ 04 ຄົນ ທີ່ຕິດຕາມປິ່ນປົວ ແມ່ນມີສຸຂະພາບຮ່າງກາຍ ຈິດໃຈສົມບູນ ແລະ ແຂງແຮງດີ;

**III. ຂໍ້ແນະນຳ**

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ,**

- ການປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແມ່ນມີຄວາມຈຳເປັນທີ່ສຸດ ໃນການສະກັດກັ້ນ ການແຜ່ລະບາດຂອງພະຍາດ ໃນປະເທດເຮົາ, ສະນັ້ນ ຈຶ່ງຂໍຮຽກຮ້ອງມາຍັງບັນດາທ່ານ ຈົ່ງພ້ອມໃຈກັນ ສືບຕໍ່ປະຕິບັດໃຫ້ກາຍເປັນຄວາມເຄີຍຊິນ ກໍຄື ການໃສ່ຜ້າປິດປາກ-ດັງ ເມື່ອເດີນທາງອອກຈາກບ້ານ, ໝັ່ນລ້າງມືໃສ່ສະບູ ຫຼື ເຈວລ້າງມືຂ້າເຊື້ອເລື້ອຍໆ, ຫຼີກລ້ຽງການເດີນທາງໄປຍັງເຂດທີ່ມີຄວາມສ່ຽງ ຫຼື ແອອັດ, ຮັກສາໄລຍະຫ່າງທາງສັງຄົມ ເປັນຕົ້ນ;
- ຂ້າພະເຈົ້າ ຂໍການຮ່ວມມື ມາຍັງພໍ່ແມ່ປະຊາຊົນ ແລະ ທຸກພາກສ່ວນ ມີຄວາມສາມັກຄີເປັນຈິດນຶ່ງໃຈດຽວ ຮ່ວມແຮງຮ່ວມໃຈກັນ ປະຕິບັດມາດຕະການຕາມຄຳແນະນຳ ຂອງຄະນະສະເພາະກິດວາງອອກ ຢ່າງຖືກຕ້ອງ ແລະ ເຂັ້ມງວດ ເພື່ອຮັບປະກັນບໍ່ໃຫ້ມີຄວາມສ່ຽງ ທີ່ຈະມີການນຳພະຍາດ ໂຄວິດ-19 ເຂົ້າມາແຜ່ລະບາດໃນປະເທດເຮົາ, ຖ້າຫາກທ່ານ ພົບເຫັນ ຜູ້ລັກລອບເຂົ້າປະເທດ ຫຼື ຜູ້ທີ່ຖືກຈຳກັດບໍລິເວນ ລັກລອບອອກຈາກສະຖານທີ່ຈຳກັດບໍລິເວນທີ່ຄະນະສະເພາະກິດກຳນົດໄວ້ນັ້ນ ຂໍຄວາມຮ່ວມມືນຳບັນດາທ່ານ ລາຍງານແກ່ເຈົ້າໜ້າທີ່ກ່ຽວຂ້ອງ ຫຼື ອຳນາດການປົກຄອງທ້ອງຖິ່ນທັນທີ ເພື່ອເຈົ້າໜ້າທີ່ ຈະນຳບຸກຄົນດັ່ງກ່າວ ກັບຄືນມາສືບຕໍ່ຈຳກັດບໍລິເວນ ໃຫ້ຄົບກຳນົດ 14 ວັນ ແລະ ເຝົ້າລະວັງຕິດຕາມອາການຂອງພວກກ່ຽວ ເພື່ອຮັບປະກັນ ບໍ່ໃຫ້ມີການແຜ່ເຊື້ອໄປສູ່ສັງຄົມ ແລະ ຄົນອ້ອມຂ້າງ;

**ຕໍ່ໄປ ຂ້າພະເຈົ້າຂໍລາຍງານກ່ຽວກັບ ສະພາບຂອງພະຍາດໄຂ້ຍຸງລາຍ ຢູ່ໃນປະເທດເຮົາ;**

- ໃນວັນທີ 16 ມິນາ 2021 ສປປ ລາວ ເຮົາ ແມ່ນ ບໍ່ມີລາຍງານຜູ້ຕິດເຊື້ອໄຂ້ຍຸງລາຍເພີ່ມ ແລະ ບໍ່ມີຜູ້ເສຍຊີວິດ (ມີລາຍງານຈາກ ນະຄອນຫຼວງວຽງຈັນ ແລະ 11 ແຂວງ)
- ຕົວເລກໄຂ້ຍຸງລາຍນັບແຕ່ວັນທີ **26/12/2020 ເປັນຕົ້ນມາ ຮອດວັນທີ 16/03/2021** ມີຜູ້ຕິດເຊື້ອກໍລະນີສະສົມທັງໝົດ **149** ຄົນ (ອັນດັບໜຶ່ງແມ່ນນະຄອນຫຼວງ, ຖັດລົງມາ ອັດຕະປື ແລະ ຫຼວງພະບາງ) ແລະ ຍັງບໍ່ມີຜູ້ເສຍຊີວິດ;
- ສໍາລັບພະຍາດໄຂ້ຍຸງລາຍ ກໍ່ຂໍການຮ່ວມມືນໍາພໍ່ແມ່ປະຊາຊົນ ແລະ ອໍານາດການປົກຄອງທຸກຂັ້ນ ສືບຕໍ່ເອົາໃຈໃສ່ໃນການຈໍາກັດແຫຼ່ງເພາະພັນຂອງໜອນນໍ້າຍຸງລາຍ ທີ່ເປັນພາຫະນໍາເຊື້ອພະຍາດ ໂດຍການປະຕິບັດ 05 ປ ຢ່າງເຂັ້ມງວດ ແລະ ຕໍ່ເນື່ອງ ເພື່ອຫຼຸດຜ່ອນໂຕຍຸງທີ່ນໍາເຊື້ອພະຍາດ ແລະ ປ້ອງກັນບໍ່ໃຫ້ເກີດມີກໍລະນີເສຍຊີວິດຈາກພະຍາດໄຂ້ຍຸງລາຍ;
- ຂໍແຈ້ງໃຫ້ບັນດາທ່ານຊາບວ່າ ທ່ານສາມາດ ຕິດຕາມຂໍ້ມູນຂ່າວສານທີ່ເປັນທາງການໄດ້
    - ຈາກເວັບໄຊ້ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ພະຍາດໂຄວິດ-19 www.covid19.gov.la
    - ເຟດບຸກຂອງສູນຂ່າວສານການແພດ ແລະ ສຸຂະສຶກສາ, ກະຊວງສາທາລະ

ນະສຸກ

- ແລະ ສາມາດໂທສອບຖາມ ສາຍດ່ວນ 165 ແລະ 166

**ມາຮອດນີ້ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນພຸດ ວັນທີ 17 ມີນາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈ ມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)**